# ຄູ່ມືການນຳໃຊ້ຢາ "Lagevrio"

| | |
|---|---|
| ຊື່ຜະລິດຕະພັນຢາ | ຢາແຄບຊູນ Lagevrio |
| ສ່ວນປະກອບ/ ປະລິມານຂອງສ່ວນປະສົມ | (ສານອອກລິດ) Molnupiravir 200mg (ຕໍ່ 1 ແຄບຊູນ) |
| ລາຍລະອຽດ | ແຄບຊູນສີສົ້ມ |
| ວິທີນຳໃຊ້/ ປະລິມານຢາ | • ກິນມື້ລະ 2ຄັ້ງ ໂດຍຄັ້ງລະ 4 ແຄັບຊູນ ເປັນເວລາ 5ວັນຕິດຕໍ່ກັນ ລວມເປັນ 10 ຄັ້ງ<br>• ຫຼັງຈາກໄດ້ຮັບການຢັ້ງຢືນວ່າ ຕິດເຊື້ອໂຄວິດ19 ແລະ ເລີ່ມສະແດງອາການແລ້ວ ກໍ່ເລີ່ມກິນຢາ ພາຍໃນ 5ມື້<br>• ໃນກໍລະນີ ຕ້ອງໄດ້ເຂົ້າໂຮງໝໍ ໃນໄລຍະເວລາທີ່ກຳລັງກິນຢາປົວໂຄວິດນີ້, ໃຫ້ປະຕິບັດຕາມຄຳແນະນຳຂອງແພດວ່າ ຊິກິນຢາຕໍ່ ຫຼື ຊິຢຸດເຊົາ |
| ຜົນດີ/ ຜົນປະໂຫຍດ | ຢານີ້ ໃຊ້ສຳລັບ ປິ່ນປົວຜູ້ໃຫຍ່ ທີ່ຕິດເຊື້ອໂຄວິດ19ແລ້ວ ໂດຍທີ່ມີຄວາມສ່ຽງສູງທີ່ຈະເກີດອາການຮ້າຍແຮງປານກາງ ຫາ ໜັກ.<br>ແຕ່ວ່າ, ຢານີ້ ໃຫ້ໃຊ້ສະເພາະບຸກຄົນທີ່ບໍ່ສາມາດໃຊ້ການປິ່ນປົວ COVID-19 ຊະນິດອື່ນ ຫຼື ຜູ້ທີ່ບໍ່ຖືກຢາປິ່ນປົວ COVID-19 ຊະນິດອື່ນໆ ເປັນຫຼັກ. |
| ວິທີເກັບຮັກສາ | ເກັບຮັກສາ ຢູ່ໃນອຸນຫະພູມ (15 ℃ - 30 ℃) |

## ♣ ຢາ **Lagevrio** ຄວນແນວໃດ?

**ກິນຄັ້ງລະ 4 ແຄບຊູນ ພ້ອມກັນ, ກິນ 2 ຄັ້ງຕໍ່ມື້ ເປັນເວລາ 5 ມື້ຕິດຕໍ່ກັນ**
**-> ກິນທັງໝົດ 10 ຄັ້ງ**




- ສາມາດກິນໄດ້ ກ່ອນ ຫຼື ຫຼັງອາຫານ, ກິນ 5 ວັນຕິດຕໍ່ກັນ ໂດຍລວມທັງໝົດເປັນ 10ຄັ້ງ, ສິ່ງສຳຄັນ ແມ່ນຕ້ອງກິນຕໍ່ເນື່ອງກັນ ບໍ່ໃຫ້ຢຸດເຊົາ.
- ຕ້ອງໄດ້ກືນພ້ອມກັນ ທັງໝົດ, ບໍ່ຄວນໄຂເມັດແຄັບຊູນ ຫຼື ຫຼຸດປະລິມານລົງແລ້ວ ຈຶ່ງກິນ.
- ການກິນຢາ ຕ້ອງໄດ້ຫ່າງກັນ 12 ຊົ່ວໂມງ, ສະນັ້ນ, ເວລາກິນ ຄັ້ງທຳອິດ ຕ້ອງໄດ້ເລືອກເອົາເວລາທີ່ຕົນເອງສະດວກ ແລະ ບໍ່ລືມງ່າຍ ເພື່ອກຳນົດເປັນເວລາກິນຢາ ຕົວຢ່າງ) 9:00 ໂມງເຊົ້າ/ 9:00 ໂມງແລງ

## ♣ ຖ້າລືມກິນຢາ ຄວນເຮັດແນວໃດ?

| ① ກໍລະນີ ເວລາລືມກິນຢາ ຍັງບໍ່ເກີນ **10** ຊົ່ວໂມງ | ② ກໍລະນີ ເວລາລືມກິນຢາ ເກີນກວ່າ **10** ຊົ່ວໂມງ ຂຶ້ນໄປແລ້ວ |
|---|---|
| - ເມື່ອຄິດອອກແລ້ວ ກໍ່ກິນທັນທີ, ຫຼັງຈາກນີ້ ຄັ້ງຕໍ່ໄປ ກໍ່ກິນຕາມເວລາປົກກະຕິ ທີ່ໄດ້ກຳນົດ ໃນເບື້ອງຕົ້ນ<br>- ຫຼັງຈາກນັ້ນ, ກໍ່ກິນຢາ ຕາມເວລາປົກກະຕິ ທີ່ກຳນົດ ໃນເບື້ອງຕົ້ນ | - ສາມາດຂ້າມ ໄປກິນຕາມ ເວລາຄາດຄະເນທີ່ຈະກິນໃນຄັ້ງຕໍ່ໄປ ຕາມທີ່ກຳນົດ ໃນເບື້ອງຕົ້ນເລີຍ<br>- ຫຼັງຈາກນັ້ນ, ຮັກສາເວລາກິນຢາ ຕາມເວລາປົກກະຕິ ທີ່ກຳນົດໄວ້ ໃນເບື້ອງຕົ້ນ |
| (ບໍ່ຄວນກິນຢາ ໃນປະລິມານ ຫຼາຍກວ່າ **2** ເທົ່າ ໃນເວລາດຽວກັນ.) | |

## ♣ ສິ່ງທີ່ຄວນລະມັດລະວັງໃນການກິນຢາ Lagevrio ແມ່ນຫຍັງ?

1. ເຄີຍໄດ້ຮັບແຈ້ງ ຈາກຜູ້ຊົມໃຊ້ນີ້ ຜ່ານມາວ່າ ພາຍຫຼັງ ກິນຢານີ້ແລ້ວ ຈະເຮັດໃຫ້ມີປະຕິກິລິຍາພູມໄວເກີນ ແລະ ມີຄວາມຫວັ່ນໄຫວ(ລະອຽດອ່ອນ)ໄດ້ງ່າຍ. ພາຍຫຼັງ ກິນຢານີ້ແລ້ວ, ຖ້າທ່ານ ຮູ້ສຶກມີອາການຂອງປະຕິກິລິຍາພູມໄວເກີນ(ເຊັ່ນ: ໃຈສັ່ນ, ມີຜື່ນ ຫຼື ອອກຕຸ່ມ, ຫາຍໃຈຝືດ) ຫຼື ເ ກີດພາວະພູມແພ້ທາງຜິວໜັງ ແມ່ນຕ້ອງໄດ້ຢຸດກິນຢານີ້ ທັນທີ ພ້ອມທັງ ແຈ້ງໄປຫາສະຖາບັນກ ານແພດ ທີ່ວາງຢາໃຫ້ທ່ານ ກິນນັ້ນ ເພື່ອແກ້ ໃຫ້ທັນການ.

2. ຢານີ້ ບໍ່ສາມາດໃຊ້ກັບແມ່ຍິງຖືພາໄດ້, ແມ່ຍິງທີ່ມີຄວາມເປັນໄປ ໃນການຖືພາ, ກ່ອນຈະກິນຢານີ້ ຕ້ອງໄດ້ໄປກວດໃຫ້ຮູ້ແນ່ນອນວ່າ ຕົນເອງ ບໍ່ຖືພາ ຈຶ່ງສາມາດກິນຢານີ້ໄດ້. ໃນກໍລະນີ ຫາກກິນໄປ ໂດຍບໍ່ຮູ້ວ່າຕົນເອງຖືພາ, ໃຫ້ຢຸດກິນທັນທີ ແລະ ປຶກສາແພດ ຫຼື ສາມາດຕິດຕໍ່ບໍລິສັດການຢາ MSD Korea (02-331-2000) ເພື່ອສອບຖາມ ຫຼື ຂໍປຶກສາ

3. ໃນໄລຍະເວລາທີ່ກຳລັງກິນຢານີ້, ສຳລັບ ແມ່ຍິງ ທີ່ວາງແຜນຈະຖືພາ ຄວນ ໃຊ້ການຄຸມກຳເນີດທີ່ມີປະສິດທິພາບ ເປັນເວລາ 4ວັນ ນັບແຕ່ມື້ໄດ້ກິນຢາປົວໂຄວິດ ຄັ້ງສຸດທ້າຍ ເປັນຕົ້ນໄປ ແລະ ຝ່າຍຊາຍ (ຄູ່ສົມລົດ) ກໍ່ຄວນໃຊ້ວິທີຄຸມກຳເນີດ ທີ່ມີປະສິດທິຜົນ ເປັນເວລາ 3 ເດືອນ. ສຳລັບແມ່ລູກອ່ອນ ທີ່ກຳລັງ ໃຫ້ນົມລູກ ຢູ່ນັ້ນ, ຖ້າກິນຢານີ້ແລ້ວ ບໍ່ຄວນໃຫ້ນົມລູກ ເປັນເວລາ 4 ວັນ ນັບແຕ່ມື້ກິນຢາ ເປັນຕົ້ນໄປ

4. ການໃຫ້ຢາແກ່ຜູ້ອື່ນ ໂດຍບໍ່ມີໃບສັ່ງ ຈາກແພດ ແມ່ນອັນຕະລາຍຫຼາຍ ແລະ ອາດຈະໄດ້ຮັບໂທດ ຕາມກົດໝາຍທີ່ກ່ຽວຂ້ອງ. ຢາທີ່ກິນແລ້ວ ມີຜົນຂ້າງຄຽງຜິດປົກກະຕິ ຕາມມາ, ຕາມລະບຽບການ ເມື່ອບໍ່ໄດ້ກິນແລ້ວ ຢາທີ່ເຫຼືອ ຕ້ອງໄດ້ສົ່ງຄືນ ເພື່ອທຳລາຍຖິ້ມ

### ♣ ຜົນຂ້າງຄຽງ ທີ່ອາດຈະເກີດໄດ້ ແມ່ນຫຍັງ?

| | | |
|---|---|---|
|  |  |  |
| ຖອກທ້ອງ | ປວດຮາກ | ວິນຫົວ |

* ນອກຈາກ ບັນດາຜົນຂ້າງຄຽງ ທີ່ກ່າວມານັ້ນແລ້ວ, ຍັງອາດຈະມີຜົນຂ້າງຄຽງອື່ນໆ ກໍ່ເປັນໄປໄດ້, ສະນັ້ນ ຖ້າ ກິນຢານີ້ແລ້ວ ເກີດອາການຂ້າງຄຽງ ຕ້ອງໄດ້ແຈ້ງຕໍ່ບໍລິສັດທີ່ຜະລິດຢານັ້ນ ຫຼື ປຶກສາກັບສະຖາບັນການແພດ ທີ່ສັ່ງຢາໃຫ້ເຮົາກິນນັ້ນ ໂດຍໄວ. ຫຼືວ່າ ສາມາດໂທແຈ້ງສະຖາບັນຄຸ້ມຄອງຄວາມປອດໄພດ້ານອາຫານ ແລະ ການຢາແຫ່ງຊາດເກົາຫຼີ(ສາຍດ່ວນ1644-6223) ກໍ່ໄດ້.

\- ສຳລັບຂໍ້ມູນເພີ່ມເຕີມ ໃຫ້ເຂົ້າໄປເບິ່ງເວັບໄຊ້ ຂອງສຳນັກງານຄວບຄຸມ ແລະ ປ້ອງກັນພະຍາດຂອງເກົາຫຼີ (www.kdac.or.kr) ຫຼື ສຸກສາລາ ທີ່ຢູ່ໃກ້ເຮືອນຕົນເອງ

대한약사회 THE KOREAN PHARMACEUTICAL ASSOCIATION

대한약사회 환자안전약물관리본부

한국의약품안전관리원